Australian Government

COVID-19 VACCINATION

# ການຖືພາ, ການລ້ຽງລູກດ້ວຍນົມແມ່, ແລະ ຢາວັກຊີນຕ້ານ COVID-19

Comirnaty (Pfizer) ແລະ Spikevax (Moderna) ແມ່ນຢາວັກຊີນທີ່ຖືກແນະນຳໃຫ້ແມ່ຍິງຖືພາ, ແມ່ຍິງທີ່ລ້ຽງລູກດ້ວຍນົມແມ່ ແລະ ແມ່ຍິງທີ່ກຳລັງວາງແຜນຖືພາ. ແມ່ຍິງສາມາດຮັບການສັກຢາວັກຊີນໄດ້ໃນທຸກລະຍະຂອງການຖືພາ.

ຄວາມສ່ຽງຈາກການເກີດຜົນລົບທີ່ຮ້າຍແຮງ, ທີ່ໄດ້ຮັບຈາກ COVID-19 ແມ່ນສູງຂຶ້ນສຳລັບແມ່ຍິງຖືພາແລະລູກນ້ອຍໃນທ້ອງຂອງເຂົາເຈົ້າ. ແມ່ຍິງຖືພາທີ່ຕິດເຊື້ອ COVID-19 ມີຄວາມສ່ຽງສູງຂຶ້ນທີ່ຈະຕ້ອງໄປໂຮງໝໍແລະຕ້ອງໄດ້ຮັບການດູແລແບບສຸກເສີນ. ລູກໃນທ້ອງຂອງເຂົາເຈົ້າກໍຈະມີແນ້ວໂນ້ມສູງຂຶ້ນເລັກນ້ອຍທີ່ຈະເກີດກ່ອນກຳນົດ (ເກີດກ່ອນ 37 ອາທິດຂອງການຖືພາ) ແລະ ຕ້ອງໄປໂຮງໝໍເພື່ອຮັບການດູແລ.

ການສັກຢາວັກຊີນແມ່ນວິທີການທີ່ດີທີ່ສຸດໃນການຫຼຸດຜ່ອນຄວາມສ່ຽງເຫຼົ່ານີ້. ທ່ານຈະຕ້ອງສັກຢາ Pfizer ສອງໂດສ ໂດຍມີລະຍະຫ່າງກັນສາມ ຫາ ຫົກອາທິດ, ຫຼືສອງໂດສຂອງຢາວັກຊີນ Moderna, ໂດຍມີລະຍະຫ່າງກັນສີ່ ຫາ ຫົກອາທິດ.

ການສຶກສາຄົ້ນຄວ້າຈາກສະຫະລັດອາເມລິກາ, ໂດຍອີງໃສ່ແມ່ຍິງຖືພາຈຳນວນ 35,000 ຄົນ ໄດ້ສະແດງໃຫ້ເຫັນວ່າຜົນຂ້າງຄຽງຫຼັງຈາກສັກຢາແມ່ນຄ້າຍຄືກັນຫຼາຍໃນກຸ່ມແມ່ຍິງຖືພາແລະແມ່ຍິງທີ່ບໍ່ຖືພາ. ການສັກຢາວັກຊີນບໍ່ໄດ້ເພີ່ມແນວໂນ້ມໃຫ້ເກີດອາການແຊກຊ້ອນຕ່າງໆເຊັ່ນເດັກເກີດກ່ອນກຳນົດ, ເດັກເສຍຊີວິດຕອນເກີດ, ເດັກຕົວນ້ອຍກວ່າປົກກະຕິ ແລະ ເດັກທີ່ເກີດຜິດຮູບຮ່າງ.

ເມື່ອຂໍ້ມູນດ້ານ COVID-19 ທີ່ກ່ຽວກັບແມ່ຍິງຖືພາມີຫຼາຍເພີ່ມຂຶ້ນ, ພວກເຮົາຈະສືບຕໍ່ອັບເດດຄຳແນະນຳຂອງພວກເຮົາ.

## ມີອາການຂ້າງຄຽງຢ່າງໃດແດ່ທີ່ອາດເກີດຂຶ້ນໄດ້ຫຼັງຈາກສັກຢາ COVID-19 ໃນລະຫວ່າງກຳລັງຖືພາ?

ອາການຂ້າງຄຽງທີ່ເກີດຂຶ້ນທົ່ວໄປຫຼັງຈາກສັກຢາວັກຊີນ COVID-19 ລວມມີ:

- ອາການໄຂ້
- ເຈັບທີ່ແຂນ
- ເຈັບຫົວ
- ປວດຕາມກ້າມຊີ້ນ
- ປວດຕາມຂໍ້
- ໜາວສັ່ນ.

ຖ້າທ່ານເກີດມີອາການຂ້າງຄຽງຢ່າງໃດໜຶ່ງທີ່ກ່າວມານີ້ຫຼັງຈາກສັກຢາວັກຊີນແລ້ວ, ທ່ານສາມາດກິນຢາ paracetamol ເພື່ອບັນເທົາອາການຂ້າງຄຽງທີ່ເກີດຂຶ້ນທົ່ວໄປນີ້. ຢາ Paracetamol ປອດໄພຕໍ່ການຖືພາໃນທຸກລະຍະ.

ການສຶກສາຄົ້ນຄວ້າຈາກທົ່ວໂລກບໍ່ໄດ້ພົບວ່າມີອາການຂ້າງຄຽງໃດໆທີ່ເກີດຂຶ້ນສະເພາະແຕ່ກັບແມ່ຍິງຖືພາຫຼືລູກນ້ອຍຂອງເຂົາເຈົ້າ. ຢາງໃດກໍດີ, ກໍເປັນໄປໄດ້ວ່າອາດຈະມີອາການຂ້າງຄຽງແບບທີ່ເກີດຂຶ້ນຍາກ ທີ່ນັກຄົ້ນຄວ້າຍັງບໍ່ທັນຄົ້ນພົບເທື່ອ.

## ມີຜົນປະໂຫຍດຫຍັງບໍສຳລັບລູກນ້ອຍຂອງຂ້ອຍຈາກການທີ່ຂ້ອຍໄດ້ສັກຢາວັກຊີນລະຫວ່າງຖືພາ?

ແມ່ຍິງຖືພາທີ່ຕິດເຊື້ອ COVID-19 ມີຄວາມສ່ຽງສູງຂຶ້ນທີ່ຈະເກີດລູກທີ່ເສຍຊີວິດຕອນເກີດ ຫຼື ບໍ່ຄົບກຳນົດ (ກ່ອນກຳນົດ). ນອກນີ້ ລູກນ້ອຍຂອງເຂົາເຈົ້າກໍມີແນວໂນ້ມວ່າຈະສະແດງອາການກົດດັນໃນລະຫວ່າງຄອດ, ຫຼື ຕ້ອງໄດ້ຮັບການປິ່ນປົວໃນຫ້ອງດູແລສຸກເສີນສຳລັບເດັກເກີດໃໝ່ໃນໂຮງໝໍ.

ການສັກຢາວັກຊີນແມ່ນວິທີການທີ່ດີທີ່ສຸດໃນການຫຼຸດຜ່ອນຄວາມສ່ຽງດັ່ງກ່າວ.

ຫຼັກຖານທາງວິທະຍາສາດສະເໜີວ່າພູມຕ້ານທານຂອງຮ່າງກາຍທີ່ໄດ້ຖືກສ້າງຂຶ້ນໃນກຸ່ມແມ່ຍິງຖືພາຫຼັງຈາກທີ່ໄດ້ຮັບການສັກຢາວັກຊີນຕ້ານ COVID-19 ສາມາດຜ່ານເຂົ້າໄປທາງສາຍແຮ່, ໂດຍສະເພາະໃນກຸ່ມແມ່ຍິງທີ່ໄດ້ສັກຢາແຕ່ລະຍະຕົ້ນໆຂອງການຖືພາທີ່ໄດ້ສັກຢາສອງໂດສ ກ່ອນລູກເກີດ. ພູມຕ້ານທານນີ້ອາດໃຫ້ການປົກປ້ອງເດັກຈາກCOVID-19ໄດ້ເປັນບາງສ່ວນໃນລະຫວ່າງທີ່ເດັກເກີດໄດ້ສອງສາມເດືອນທຳອິດຂອງຊີວິດຂອງພວກເຂົາ.

## ມີຄຳແນະນຳຫຍັງແດ່ສຳລັບແມ່ຍິງທີ່ລ້ຽງລູກດ້ວຍນົມແມ່?

Pfizer ແລະ Moderna ໄດ້ຖືກແນະນຳສຳລັບແມ່ຍິງທີ່ກຳລັງລ້ຽງລູກດ້ວຍນົມແມ່. ທ່ານສາມາດສືບຕໍ່ໃຫ້ລູກກິນນົມໄດ້ໃນລະຫວ່າງກ່ອນຫຼືຫຼັງຈາກສັກຢາວັກຊີນ.

## ມີຄຳແນະນຳຫຍັງແດ່ສຳລັບແມ່ຍິງທີ່ວາງແຜນວ່າຈະຖືພາ?

Pfizer ແລະ Moderna ກໍໄດ້ຖືກແນະນຳເຊັ່ນກັນສຳລັບແມ່ຍິງທີ່ວາງແຜນວ່າຈະຖືພາ. ການທີ່ທ່ານໄດ້ຮັບການສັກຢາກ່ອນຕັ້ງທ້ອງນັ້ນໝາຍເຖິງວ່າທ່ານມີແນວໂນ້ມວ່າຈະໄດ້ຮັບການປົກປ້ອງຈາກ COVID-19 ຕະຫຼອດລະຍະຂອງການຖືພາ. ໂປຼດສັງເກດດ້ວຍວ່າ:

- ທ່ານບໍ່ຈຳເປັນຕ້ອງຫຼີກເວັ້ນບໍ່ຖືພາກ່ອນຫຼືຫຼັງການສັກຢາວັກຊີນ COVID-19.
- ຢາວັກຊີນບໍ່ມີຜົນກະທົບຕໍ່ການມີລູກໄດ້.
- ທ່ານບໍ່ມີຄວາມຈຳເປັນຕ້ອງກວດເບິ່ງວ່າຕົນເອງຖືພາຫຼືບໍ່ກ່ອນໄປຮັບການສັກຢາວັກຊີນ.

## ສຳລັບຂໍ້ມູນເພີ່ມເຕີມ

ເພື່ອຊອກຮູ້ວ່າທ່ານຈະສາມາດໄປຮັບການສັກຢາວັກຊີນຕ້ານ COVID-19 ໄດ້ຢູ່ໃສ, ຈົ່ງເຂົ້າໄປທີ່

https://covid-vaccine.healthdirect.gov.au/

ຖ້າທ່ານມີຄຳຖາມໃດໆກ່ຽວກັບສັກຢາວັກຊີນຕ້ານ COVID-19, ໃຫ້ລົມກັບທ່ານໝໍຂອງທ່ານ, ເຂົ້າໄປເບິ່ງທີ່ health.gov.au/covid19-vaccines-languages, ຫຼື ໂທລະສັບຫາ ສາຍຊ່ວຍເຫຼືອດ້ານໂຄໂຣນາໄວຣັສແຫ່ງຊາດ ທີ່ເລກໂທ 1800 020 080.

Interpreter

ສຳລັບບໍລິການນາຍພາສາ, ໃຫ້ໂທເລກ 131 450.